## ໂຮງຮຽນວັນອາທິດ
## ວັນອາທິດ ທີ 14 ເດືອນພຶສຈິກາ 2021 (11-14-2021 )

---

### ຄວາມໝັ້ນໃຈພາຍຫຼັງທີ່ພວກເຮົາລົ້ມເຫຼວ

*ເມື່ອໃດທີ່ທ່ານເຫັນຄວາມລົ້ມເຫຼວນໍາໄປສູ່ສິ່ງທີ່ເປັນທາງບວກ?*

**ຈຸດສໍາຄັນໃນບົດຮຽນ:** ຈົ່ງໄວ້ວາງໃຈພຣະເຈົ້າໃຫ້ຊ່ວຍທ່ານຫວິດພົ້ນຈາກຄວາມລົ້ມເຫຼວ(ບາບ).

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ທີມຂອງພວກເຮົາໄດ້ນໍາໜ້າຄະແນນ 6-2 ມັນເປັນຕອນສຸດທ້າຍຂອງການແຂ່ງຂັນແລ້ວ, ແລະທີມຄູ່ແຂ່ງອື່ນໄດ້ຢືນຢູ່ເຕັມຈຸດຕຽມຈະທໍາຄະແນນ. ໝາກບານໄດ້ຂ່ວາງອອກຈາກມືພຸ່ງຕົງໄປກາງເຄິ່ງແລະສຽງດັງແປ໊ງ! ລູກບານໄດ້ພຸ້ງໜ້າໄປຫາຮົ້ວ. ສຽງໂຮ່ຮ້ອງສນັ່ນຂຶ້ນຢ່າງແຮງການແຂ່ງຂັນໄດ້ຈົບລົງດ້ວຍການສະເໝີກັນ.

ຂ້າພະເຈົ້າຮູ້ສຶກເຖິງຄວາມເຈັບໃຈຂອງຜູ້ຂວ່າງບານໃນຂນະທີ່ລາວຍ່າງຄໍຕົກອອກຈາກໂນນບ່ອນຂວ່າງບານ. ຂ້າພະເຈົ້າບໍ່ໄດ້ເປັນພຽງຄຣູຝຶກລາວ; ຂ້າພະເຈົ້າເປັນພໍ່ຂອງລາວ. ຕາມຄວາມຈິງແລ້ວລູກຊາຍຂ້າພະເຈົ້າມີປະສົບການອັນດີໃນສະໜາມ, ແຕ່ມັນບໍ່ສໍາຄັນ, ເພາະຢູ່ໃນໃຈຂອງລາວແມ່ນລາວລົ້ມເຫຼວ, ແລະຄວາມໝັ້ນໃຈຂອງລາວໄດ້ຖືກທໍາລາຍ.

ພວກເຮົາທຸກຄົນອາດຈະລົ້ມເຫຼວໃນບາງຄັ້ງ. ເມື່ອພວກເຮົາເຮັດຜິດພາດ, ມັນເປັນການງ່າຍໃນການທີ່ເຮົາຈະກ່າວໂທດຕົວເອງ. ອາດຈະແມ່ນປາກຂອງພວກເຮົາທີ່ໄດ້ປຽບດີທີ່ສຸດຈາກພວກເຮົາ. ພວກເຮົາໄດ້ປະທິ້ມທຸກຢ່າງໄວ້ໃນສະໜາມກິລານັ້ນ, ຫຼືພວກເຮົາຈະກັບໄປວົນວຽນຢູ່ກັບສິ່ງເດີມໆ, ຄວາມບາບແລະຄວາມລົ້ມເຫຼວຂອງພວກເຮົາສາມາດທໍາລາຍຄວາມໝັ້ນໃຈຂອງພວກເຮົາໄດ້. ເມື່ອສິ່ງນັ້ນເກີດຂຶ້ນ, ພວກເຮົາຈະດຶງເອົາຕົວຂອງເຮົາອອກຈາກຈຸດນັ້ນແລະນໍາຕົວເຮົາມຸ້ງໜ້າຄືນສູ່ການດໍາເນີນຊີວິດໃນພຣະເຈົ້າໄດ້ແນວໃດ? ໃຫ້ພວກເຮົາມາສຶກສາເບິ່ງບົດຮຽນການຊີ້ນໍາຈາກຊີວິດຂອງອັບຣາມ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ປະຖົມມະການ 16:1-5

*1. ນາງຊາຣາຍເມັຽອັບຣາມບໍ່ເຄີຍມີລູກ ແຕ່ນາງມີສາວໃຊ້ເອຢິບຜູ້ນຶ່ງຊື່ຮາກາ. 2. ຊາຣາຍຈຶ່ງເວົ້າຕໍ່ອັບຣາມວ່າ, "ເບິ່ງດູຈົນເຖິງດຽວນີ້ພຣະຜູ້ເປັນເຈົ້າບໍ່ໄດ້ໃຫ້ຂ້ອຍມີລູກ ເປັນຫຍັງເຈົ້າຈຶ່ງບໍ່ສົມສູ່ຮ່ວມກັບສາວໃຊ້ຂອງຂ້ອຍ? ບາງທີນາງຈະມີລູກໃຫ້ຂ້ອຍກໍໄດ້." 3. ດັ່ງນັ້ນ ອັບຣາມກໍເຮັດຕາມ ຊາຣາຍຈຶ່ງມອບນາງຮາກາສາວໃຊ້ຊາວເອຢິບໃຫ້ເປັນເມັຽນ້ອຍຂອງຜົວຕົນ ເຫດການນີ້ມີຂຶ້ນຫລັງຈາກອັບຣາມອາສັຍຢູ່ໃນປະເທດການາອານເປັນເວລາສິບປີແລ້ວ. 4. ຄັນອັບຣາມໄດ້ຢູ່ຮ່ວມກັບນາງຮາກາແລ້ວ ນາງກໍເລີຍຖືພາ ເມື່ອນາງຮາກາຮູ້ວ່ານາງຖືພາຈຶ່ງເກີດມີຄວາມຈອງຫອງ ດູຖູກຢຽບຫຍາມນາງຊາຣາຍ. 5. ຄັນແລ້ວ ຊາຣາຍຈຶ່ງເວົ້າກັບອັບຣາມວ່າ, "ມັນເປັນຄວາມຜິດຂອງເຈົ້າທີ່ນາງຮາກາດູຖູກຢຽບຫຍາມຂ້ອຍ ຂ້ອຍໄດ້ເອົາສາວໃຊ້ຂອງຂ້ອຍໃຫ້ເປັນເມັຽເຈົ້າ ແຕ່ເມື່ອມັນຮູ້ວ່າມັນຖືພາແລ້ວກໍດູຖູກຢຽບຫຍາມຂ້ອຍ ຂໍພຣະຜູ້ເປັນເຈົ້າຕັດສິນເອງເຖີດວ່າໃນລະຫວ່າງຂ້ອຍກັບເຈົ້າແມ່ນຜູ້ໃດຖືກ ແລະແມ່ນຜູ້ໃດຜິດ."*

ນີ້ແມ່ນເປັນເຣື່ອງລາວຄວາມລົ້ມເຫຼວແລະການລຸກຢືນຂຶ້ນກ້າວເດີນໜ້າຕໍ່ໄປໃນຊີວິດກັບພຣະເຈົ້າຂອງອັບຣາມ. ໃນເຣື່ອງຂອງອັບຣາມກ່ຽວຂ້ອງພົວພັນລະຫ່ວາງສາມຄົນຄື: ຊາຣາຍ, ຮາກາ, ແລະອັບຣາມ. ແບບວິທີຄິດຂອງຊາວຕາເວັນຕົກໃນສະຕະວັດທີ່ຊາວເອັດຂອງພວກເຮົາອາດຈະຕົກໃຈກັບຂໍ້ສເນີຂອງນາງຊາຣາຍ. ພວກເຮົາເຫັນຄຳແນະນຳຂອງນາງວ່ານັ້ນເປັນການບໍ່ເຊື່ອຟັງຢ່າງແທ້ຈິງແລະຍັງເປັນການຊຸກຍູ້ໃນການຫຼິ້ນຊູ້. ແຕ່ໃນຄວາມຄິດຂອງນາງແມ່ນຢູ່ໃນສະຖານະການທີ່ເໝາະສົມ-ນາງຕ້ອງການທີ່ຈະຊ່ວຍພຣະເຈົ້າໃນແຜນການຂອງພຣະອົງ-ແລະນາງກໍຢູ່ໃນຖ້ານກາງວັດທະນະທຳທີ່ບໍ່ຄິດແລ້ວຄິດອີກເຖິງສອງຄັ້ງກ່ຽວກັບເຣື່ອງນີ້. ມັນຍັງເປັນເຣື່ອງທັມມະດາຢູ່ໃນຂະນົບທຳນຽມຂອງຄົນບູຮານໃກ້ທິດຕາເວັນອອກ. ສຳລັບຜູ້ຊາຍທີ່ມີຄວາມປາຖນາຈະມີລູກກັບເມັຽອີກຜູ້ນຶ່ງຫຼືກັບສາວໃຊ້ຄົນອື່ນໆ. ພຣະເຈົ້າໄດ້ກ່າວໄວ້ວ່າອັບຣາມຈະເປັນບິດາຂອງຊົນຊາດໃຫ່ຍ, ແຕ່ອັບຣາມຍັງບໍ່ມີບຸດຈາກຜູ້ໃດແລະຈະເປັນໃຜ. ດັ່ງນັ້ນ, ເຫດຜົນຂອງຊາຣາຍອາດຈະ "ເປັນທາງອອກ" ແລະຄຳສັນຍາກໍຈະບັນລຸຜົນໄດ້. ນອກຈາກນັ້ນ, ເນື່ອງຈາກນາງຮາກາເປັນສາວໃຊ້ຂອງນາງຊາຣາຍ, ລູກຂອງຮາກາສາມາດຖືວ່າເປັນລູກຂອງຊາຣາຍໄດ້.

ເຖິງແມ່ນວ່າພວກເຮົາຄິດວ່າຊາຣາຍໄດ້ຕັດສິນຢ່າງບໍ່ຖືກຕ້ອງ, ກໍຂໍຢ່າໃຫ້ຄຳຕຳນິຕິຽນຕົກໃສ່ນາງທັງໝົດ. ຫຼັງຈາກນັ້ນ, ອັບຣາມກໍເຮັດໄປຕາມແຜນການ, ລາວບໍ່ສາມາດທີ່ຈະຕອບປະຕິເສດວ່າບໍ່, ແຕ່ເຫດຜົນຂອງຊາຣາຍນັ້ນມີເຫດຜົນດີສຳລັບອັບຣາມ. ລາວເຊື່ອໃນຄຳສັນຍາຂອງພຣະເຈົ້າກ່ຽວກັບການມີທາຍາດສືບຕະກຸນ, ແຕ່ບາງທີອັນນີ້ແມ່ນວິທີທີ່ລາວຄວນເຮັດ "ໝັ້ນໃຈກັບຄວາມເຊື່ອຂອງລາວ." ຮາກາເປັນສາວໃຊ້ຊາວເອຢິບທີ່ອາດໄດ້ມາໃນລະຍະທີ່ອັບຣາມແລະຊາຣາຍເຂົ້າໄປອາສັຍຢູ່ໃນເອຢິບ. ຊາຣາຍໄດ້ໃຊ້ນາງຮາກາເປັນຕົວແທນຮັບອຸ້ມທ້ອງແທນເໝືອກັບຄົນໃນສມັຍປະຈຸບັນ. ເພາະວ່າຕຳແໜ່ງໜ້າທີ່ຜູ້ຮັບໃຊ້, ຮາກາບໍ່ມີທາງເລືອກນອກເໜືອໄປຈາກການເຮັດຕາມແຜນການ. ຜົນອອກມາກໍຄື, ນາງຖືພາ. ແຜນການຂອງນາງຊາຣາຍເບິ່ງຄືວ່າໄດ້ຜົນ, ແຕ່ຕໍ່ມາສະຖານະການບໍ່ດີ. ເມື່ອນາງຮາກາຕັ້ງຄັນ, ຄວາມຍິ່ງຈອງຫອງຂອງນາງກໍເກີດຂຶ້ນເມື່ອນາງຢູ່ຕໍ່ໜ້າຊາຣາຍ. ໃນຂະນົບທຳນຽມນັ້ນ, ສາວຮັບໃຊ້ຍິງທີ່ຕອບສນອງເປັນຜູ້ສືບທອດສາມາດຖືວ່າມີສິດເທົ່າທຽມກັນກັບພັນລະຍາຄົນທຳອິດ. ນາງມີສິດເສລີພາບຂອງນາງ, ຮັບມໍລະດົກ, ຫຼືທັງສອງຢ່າງ. ຊາຣາຍເຫັນພຶດຕິກຳຂອງນາງຮາກາທີ່ສະແດງຕົວບໍ່ນັບຖືແລະຍັງຈະເປັນພັຍອັນຕະລາຍ. ຄວາມຂັດເຄືອງໃຈແລະຄວາມບໍ່ເປັນໄປຕາມລະບຽບລະຫ່ວາງຍິງທັງສອງນີ້ໄດ້ເພີ້ມຂຶ້ນຈົນມາເຖິງທີ່ຊາຣາຍທົນບໍ່ໄຫວຈຶ່ງຕໍ່ວ່າກັບອັບຣາມ! "ມັນເປັນຄວາມຜິດຂອງເຈົ້າທີ່ນາງຮາກາດູຖູກຢຽບຫຍາມຂ້ອຍ!"(ຂໍ້. 5) ມັນເບິ່ງຄືວ່າຊາຣາຍໄດ້ລືມໄປກັບການຈັດການທັງໝົດໃນເຣື່ອງນີ້ດ້ວຍຕົວເອງ, ແລະນາງໄດ້ຮຽກຮ້ອງໃຫ້ພຣະເຈົ້າເປັນຜູ້ຕັດສິນລະຫ່ວາງສອງຄົນ. ອັບຣາມກັບໄດ້ມອບບັນຫາທັງໝົດນັ້ນໄວ້ໃນມືຂອງຊາຣາຍອີກເພື່ອໃຫ້ນາງແກ້ໄຂ. ຂໍ້ສເນີຂອງລາວ: "ນີ້ເດສາວໃຊ້ຂອງເຈົ້າຢູ່ນີ້ ແລະຍັງຢູ່ໃຕ້ການຄຸ້ມຄອງຂອງເຈົ້າ"(ຂໍ້. 6), ແມ່ນເພື່ອເຕືອນນາງຊາຣາຍໃຫ້ຮູ້ວ່ານາງຍັງເປັນພັນລະຍາແລະມີສິດເຕັມທີ. ອັບຣາມຍັງກ່າວຕື່ມອີກວ່າ "ຈົ່ງປະຕິບັດກັບນາງຕາມທີ່ເຈົ້າເຫັນສົມຄວນສາ" ໜ້າເສັຽດາຍ, ຊາຣາຍໄດ້ໃຊ້ສິດທິຕຳແໜ່ງຂອງນາງໄປໃນທາງທີ່ຜິດແລະປະຕິບັດຕໍ່ນາງຮາກາຢ່າງໂຫດຮ້າຍຈົນນາງໄດ້ໜີໄປ.

## 2. ປະຖົມມະການ 17:1-3

*1. ເມື່ອອັບຣາມອາຍຸໄດ້ເກົ້າສິບເກົ້າປີ ພຣະຜູ້ເປັນເຈົ້າຊົງປາກົດໃຫ້ເພິ່ນເຫັນ ແລະກ່າວວ່າ, "ເຮົາແມ່ນພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ ຈົ່ງເຊື່ອຟັງເຮົາແລະປະພຶດແຕ່ຄວາມຊອບທັມຕລອດຊີວິດຂອງເຈົ້າ. 2. ເຮົາຈະເຮັດຄຳໝັ້ນສັນຍາກັບເຈົ້າແລະຈະໃຫ້ເຊື້ອສາຍຂອງເຈົ້າເພີ້ມທະວີຂຶ້ນ." 3. ອັບຣາມກົ້ມຂາບລົງ ແລ້ວພຣະເຈົ້າຊົງກ່າວວ່າ,*

ສິບສາມປີໄດ້ຜ່ານໄປລະຫ່ວາງປະຖົມມະການບົດທີ 16-17; ບັດນີ້ພຣະເຈົ້າໄດ້ມາປາກົດຕົວຕໍ່ອັບຣາມອີກເທື່ອນຶ່ງ! ໃນ

ຈຸດນີ້ຂອງຊີວິດອັບຣາມ, ລາວອາດຈະຖືວ່າອິດຊະມາເອນ, ລູກທີ່ເກີດຈາກລາວກັບນາງຮາກາເມື່ອສິບສາມປີກ່ອນ, ເປັນລູກຂອງຄຳສັນຍາຂອງພຣະເຈົ້າ. ເວົ້າຢ່າງກົງໄປກົງມາ, ພວກເຮົາກໍບໍ່ຮູ້, ແຕ່ພວກເຮົາຮູ້ວ່າພຣະເຈົ້າກຳລັງຈະເຮັດໃຫ້ອັບຣາມເຂົ້າໃຈແຈ້ງຂຶ້ນຕື່ມວ່າອັບຣາມຈະມີລູກຊາຍຄົນຕໍ່ໄປ-ລູກຊາຍຕາມຄຳສັນຍາ (ປະຖົມມະການ 17:19-21). ແຕ່ກ່ອນທີ່ພຣະເຈົ້າຈະເປີດເຜີຍນີ້, ພຣະອົງໄດ້ເຕືອນອັບຣາມວ່າ, "ເຮົາແມ່ນພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່." ພຣະອົງເປັນ (El Shaddai), ພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ສູງສຸດ. ພຣະເຈົ້າກຳລັງບອກກັບອັບຣາມວ່າພຣະອົງຈະເຮັດທັງຫຼາຍຜ່ານທາງຊາຣາຍ, ແລະສິ່ງນີ້ຈະຢູ່ໃນມືແລະພຣະປະສົງຂອງ(El Shaddai), ພຣະເຈົ້າຜູ້ຊົງຣິດອຳນາດທັງໝົດແລະເປັນພຣະເຈົ້າພຽງຜູ້ດຽວ. ບໍ່ມີຫຍັງຈະຢູ່ເໜືອຄວາມສາມາດຂອງພຣະອົງ, ລວມທັງການເຮັດໃຫ້ຜູ້ຊາຍອາຍຸເກົ້າສິບເກົ້າປີມີລູກໄດ້.

ອັບຣາມໄດ້ລ່ວງໜ້າແຜນການຂອງພຣະເຈົ້າໃນເມື່ອລາວເບິ່ງຫາຊ່ອງທາງທີ່ຈະມີລູກກັບນາງຮາກາ. ໃນເວລານັ້ນອັບຣາມອາດຈະຍັງບໍ່ເຂົ້າໃຈກ່ຽວກັບເລື່ອງນັ້ນ, ແຕ່ດຽວນີ້ລາວກຳລັງຈະຮຽນຮູ້ຈັກແຜນການອັນຍິ່ງໃຫຍ່ຂອງພຣະເຈົ້າ. ອັບຣາມບໍ່ໄດ້ຍິນຄຳຕຳນິຈາກພຣະເຈົ້າ, ແຕ່ລາວໄດ້ຍິນສຽງບອກໃຫ້ດຳເນີນຊີວິດຢູ່ໃນຄວາມຊອບທັມຂອງພຣະເຈົ້າແລະກ້າວເດີນໄປຂ້າງໜ້າດ້ວຍຄວາມເຊື່ອຟັງ.

ຈົ່ງສັງເກດ, ເບິ່ງການຕອບສນອງຕໍ່ການຊົງເອີ້ນຂອງພຣະເຈົ້າໃຫ້ເຊື່ອຟັງແລະເຕືອນເຖິງພັນທະສັນຍາວ່າ: "ອັບຣາມກົ້ມຂາບລົງດິນ"(ຂໍ້ 3), ອັນນີ້ເປັນການສະແດງໃຫ້ເຫັນເຖິງຄວາມເຄົາລົບຕໍ່ບຸກຄົນໃດນຶ່ງທີ່ຢູ່ເໜືອກ່ວາຕາມວັດທະນະທຳ. ໃນການຖ່ອມຕົວນີ້ອັບຣາມຍອມຮັບວ່າພຣະເຈົ້າເປັນຜູ້ມີຣິດທານຸພາບທຸກປະການແລະເຮັດໃຫ້ລາວເຕັມໃຈເຊື່ອຟັງທຸກປະການ. ອັບຣາມເຕັມໃຈເຮັດທຸກສິ່ງຕາມຄວາມຕ້ອງການຂອງອົງພຣະຜູ້ເປັນເຈົ້າ.

## 3. ປະຖົມມະການ 17:4-9

***4.*** *"ນີ້ແມ່ນຄຳໝັ້ນສັນຍາທີ່ເຮົາເຮັດກັບເຈົ້າ ເຮົາສັນຍາວ່າເຈົ້າຈະເປັນບັນພະບູລຸດຂອງປະເທດທັງຫຼາຍ. 5. ເຈົ້າຈະບໍ່ຊື່ອັບຣາມອີກຕໍ່ໄປ ແຕ່ເຈົ້າຈະມີຊື່ໃໝ່ວ່າ ອັບຣາຮາມ ເພາະວ່າເຮົາກຳລັງໃຫ້ເຈົ້າເປັນບັນພະບູລຸດຂອງປະເທດທັງຫລາຍ. 6.ເຮົາຈະໃຫ້ເຊື້ອສາຍຂອງເຈົ້າເພີ່ມທະວີຍິ່ງຂຶ້ນ ຈົນກາຍເປັນປະເທດຕ່າງໆແລະຫຼາຍຄົນຢູ່ໃນຈຳນວນເຊື້ອສາຍນີ້ຈະເປັນເຖິງຂັ້ນກະສັດ. 7. ເຮົາຈະຖືຮັກສາຄຳໝັ້ນສັນຍາຂອງເຮົາທີ່ມີຕໍ່ເຈົ້າ ແລະຕໍ່ເຊື້ອສາຍຂອງເຈົ້າໃນເຊັ່ນຄົນຕໍ່ມາ ໃຫ້ເປັນຄຳໝັ້ນສັນຍາອັນຕະຫລອດໄປເປັນນິດ ເຮົາຈະເປັນພຣະເຈົ້າຂອງເຈົ້າ ແລະເປັນພຣະເຈົ້າຂອງເຊື້ອສາຍຂອງເຈົ້າດ້ວຍ. 8. ເຮົາຈະໃຫ້ດິນທີ່ເຈົ້າອາສັຍຢູ່ໃນປັດຈຸບັນຖານະຊາວຕ່າງດ້າວນີ້ໃຫ້ແກ່ເຈົ້າ ແລະເຊື້ອສາຍຂອງເຈົ້າ ດິນແດນການາອານທັງໝົດຈະເປັນຂອງພວກເຈົ້າຕລອດໄປ ແລະເຮົາກໍຈະເປັນພຣະເຈົ້າຂອງພວກເຈົ້າ." 9. ພຣະເຈົ້າຊົງກ່າວກັບອັບຣາຮາມວ່າ, "ເຈົ້າເອງກໍດີເຊື້ອສາຍຂອງເຈົ້າໃນເຊັ່ນຕໍ່ໄປກໍດີ ຈົ່ງຮັກສາຄຳໝັ້ນສັນຍາຂອງເຮົາ.*

ພຣະເຈົ້າໄດ້ໃຫ້ສັນຍາໄວ້ກ່ອນແລ້ວກ່ຽວກັບເລື່ອງແຜ່ນດິນແລະເຊື້ອສາຍຂອງລາວ, ແຕ່ເທື່ອນີ້ພຣະອົງໄດ້ເຮັດພັນທະສັນຍາຢ່າງເປັນທາງການ. ຈາກຈຸດນີ້, ອັບຣາມຈະຕ້ອງລົງນາມແລະຈົດຈຳລະນຶກເຖິງພັນທະສັນຍານີ້: ຊື່ໃໝ່ທີ່ໃຊ້ພາຍໃນພັນທະສັນຍານີ້, ພຣະເຈົ້າໄດ້ເຮັດຄຳໝັ້ນສັນຍາຫຼາຍຢ່າງກັບອັບຣາຮາມ. ສິ່ງນຶ່ງທີ່ດຶງດູດຄວາມສົນໃຈຂອງພວກເຮົາ, ແຕ່ພຣະເຈົ້າບໍ່ເຄີຍຕັ້ງພຣະທັຍໃຫ້ມັນເປັນສະເພາະກັບເຊື້ອສາຍທາງດ້ານຮ່າງກາຍຂອງອັບຣາຮາມ, ຊາວຢິວ, ພວກເຮົາເຂົ້າໃຈກ່ຽວເລື່ອງນີ້ຕາມທີ່ພວກເຮົາເຫັນຄວາມສຳຄັນຂອງຄຳວ່າເຊື້ອສາຍໃນຄຳທຳນວາຍນີ້. ພວກເຮົາອາດຈະຄິດວ່າເລື່ອງນີ້ເປັນການອ້າງອີງເຖິງອີຊາກລູກຊາຍຂອງອັບຣາຮາມ. ແຕ່ເລື່ອງນີ້ແມ່ນອ້າງອີງເຖິງພຣະເຢຊູ. ພຽງແຕ່ໃນສອງສາມລຸ້ນເທົ່ານັ້ນ, ເຊື້ອສາຍຂອງອັບຣາຮາມມີຫຼາຍ, ແຕ່ເຊື້ອສາຍຂອງລາວຄົນນຶ່ງທີ່ມີຄວາມສຳຄັນຫຼາຍກ່ວາຄົນອື່ນໆທັງໝົດ. ພຣະເຢຊູເຮັດ

ໃຫ້ຄວາມລອດເປັນໄປໄດ້ສຳລັບພວກເຮົາທຸກຄົນ. ຄຳສັນຍາທີ່ໃຫ້ໄວ້ກັບອັບຣາຮາມໃນເບື້ອງຕົ້ນນັ້ນໄດ້ຂະຫຍາຍຄວາມໝາຍໄປເຖິງພວກເຮົາທຸກຄົນທີ່ມີຄວາມເຊື່ອແລະໄວ້ວາງໃຈໃນພຣະເຢຊູຄຣິດ. "ຖ້າເຈົ້າທັງຫຼາຍເປັນຂອງພຣະຄຣິດແລ້ວເຈົ້າກໍເປັນເຊື້ອສາຍຂອງອັບຣາຮາມ ຄືເປັນຜູ້ຮັບມໍລະດົກຕາມພຣະສັນຍາ."(ຄາລາເຕັຽ3:29). ພັນທະສັນຍາທີ່ພວກເຮົາມີໃນພຣະຄຣິດລວມເຖິງຄຳສັນຍາເຣື່ອງແຜ່ນດິນສວັນສຳລັບຜູ້ທີ່ເຊື່ອຕິດຕາມພຣະອົງ, ຜູ້ທີ່ເປັນພົນລະເມືອງຂອງອານາຈັກຂອງພຣະອົງໃນໂລກນີ້, ຈະເປັນຜູ້ສືບທອດແຜ່ນດິນໂລກແລະອານາຈັກສວັນຂອງພຣະເຈົ້າ! (ມັດທາຍ 5:1-10). ພຣະເຈົ້າໄດ້ຊອກຫາຄວາມສຳພັນທາງພັນທະສັນຍາກັບອັບຣາຮາມ, ແລະພຣະອົງມີພຣະປະສົງທີ່ຈະມີຄວາມສຳພັນໃນພັນທະສັນຍາໃໝ່ກັບພວກເຮົາເໝືອນກັນ. ເໝືອນດັ່ງກັບພຣະອົງໄດ້ບອກກັບອັບຣາຮາມວ່າ, "ຈົ່ງເຊື່ອຟັງເຮົາແລະປະພຶດແຕ່ຄວາມຊອບທັມຕລອດຊີວິດຂອງເຈົ້າ." (ປະຖົມມະການ 17:1), ພຣະອົງໄດ້ຮຽກເອີ້ນໃຫ້ພວກເຮົາໄດ້ເຮັດຢ່າງດຽວກັນ. ຄືໃນພຣະເຢຊູຄຣິດພວກເຮົາສາມາດດຳເນີນຊີວິດຢູ່ໃນພຣະອົງ. ແລະພວກເຮົາບໍ່ຖືກຕຳໜິເພາະວ່າ ພຣະຄຣິດໄດ້ໃຫ້ອະພັຍພວກເຮົາແລະເຮັດໃຫ້ພວກເຮົາບໍ່ມີບາບເມື່ອພວກເຮົາເຫັນທຸກສິ່ງທີ່ພຣະເຈົ້າໄດ້ເຮັດໃນພຣະຄຣິດເພື່ອເຮັດໃຫ້ສາຍສຳພັນໃນພັນທະສັນຍານີ້ກັບພຣະອົງເປັນໄປໄດ້, ໃຫ້ພວກເຮົາຕອບສນອງຄືກັບທີ່ອັບຣາຮາມໄດ້ເຮັດ, ກົ້ມຂາບລົງ, ຕໍ່ໜ້າພຣະພັກຂອງພຣະເຈົ້າດ້ວຍຄວາມຖ່ອມຕົວແລະຂອບພຣະຄຸນ. ຄວາມແນ່ນອນຂອງຄວາມລົ້ມເຫຼວໄດ້ຖືກແທນທີ່ດ້ວຍການໃຫ້ອະພັຍ. ພຣະອົງໄດ້ໄຖ່ພວກເຮົາອອກຈາກຄວາມລົ້ມເຫຼວແລະນຳພວກເຮົາເຂົ້າສູ່ເສັ້ນທາງແຫ່ງຊີວິດດ້ວຍຄວາມເຊື່ອໝັ້ນໃຈເຖິງແມ່ນວ່າພວກເຮົາຈະໄດ້ປະເຊີນກັບຄວາມລົ້ມເຫຼວມາແລ້ວ.

## ການນຳໃຊ້ໃນຊີວິດ

ພວກເຮົາຄວນໄວ້ວາງໃຈພຣະເຈົ້າໃນການຊົງໄຖ່ພວກເຮົາອອກຈາກຄວາມລົ້ມເຫຼວຂອງພວກເຮົາ. ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ຕໍ່ລົງໄປນີ້.

❖ ***ເປັນເຈົ້າຂອງມັນ.*** ຂໍໃຫ້ພຣະເຈົ້າຄົ້ນເບິ່ງຫົວໃຈຂອງທ່ານ. ກຳນົດຂໍ້ຜິດພາດຫຼືຄວາມລົ້ມເຫຼວທີ່ປາກົດຂຶ້ນ. ຢຸດເສແສ້ງ, ຢຸດການຫຼິ້ນເກມ, ຢຸດເຊື່ອງຊ້ອນແລະຮັບຜິດຊອບ. ດຽວນີ້ເຖິງເວລາທີ່ຈະເປັນເຈົ້າຂອງມັນແລ້ວ.

❖ **ສາລະພາບ.** ຢ່າຢຸດເຊົາໃນການນຳເອົາຄວາມລົ້ມເຫຼວຂອງທ່ານໄປຫາພຣະເຈົ້າ; ຈົດຈຳອາຣົມຄວາມຮູ້ສຶກໃນເວລານັ້ນ. ແລ້ວປ່ຽນແປງຕຳແໜ່ງຂອງທ່ານຕາມສະພາບຂອງຮ່າງກາຍຂອງທ່ານແລະຄຸເຂົ່າລົງ. ກົ້ມຂາບລົງຕໍ່ໜ້າພຣະເຈົ້າຜູ້ຊົງພຣະຊົນຢູ່ແລະຊອກຫາການໃຫ້ອະພັຍຂອງພຣະອົງ. ສະແດງໃຫ້ພຣະອົງເຫັນວ່າທ່ານກຽດຊັງຄວາມບາບທີ່ຢູ່ໃນຊີວິດຂອງທ່ານຫຼາຍປານໃດ.

❖ **ເຊື່ອ.** ຈົດຈຳການໃຫ້ອະພັຍຂອງພຣະອົງແທນທີ່; ອັນນີ້ມັນບໍ່ແມ່ນຈຸດໝາຍປາຍທາງ. ຈົ່ງໄວ້ວາງໃຈໃນອຳນາດຂອງການໃຫ້ອະພັຍຂອງພຣະອົງ. ບໍ່ຕ້ອງສົງສັຍມັນ. ແຕ່ຈົ່ງລຸກຂຶ້ນ, ຄວາມບາບຈະລຸດອອກ. ທ່ານຖືກສຳລະໃຫ້ສະອາດ. ສືບຕໍ່, ຈາກນັ້ນກໍບອກຄົນອື່ນກ່ຽວກັບຊັຍຊະນະທີ່ພຣະອົງໄດ້ມອບໃຫ້ກັບທ່ານ.

ພວກເຮົາທຸກຄົນປະເຊີນກັບຄວາມຜິດຫວັງໃນຊີວິດ. ບາງສິ່ງບາງຢ່າງທີ່ພວກເຮົາໄດ້ນຳເອົາດ້ວຍຕົນເອງ. ມັນເປັນການດີທີ່ຮູ້ວ່າພຣະເຈົ້າບໍ່ພຽງແຕ່ວາງພວກເຮົາໄວ້ເທິງບ່ອນນັ່ງ. ພຣະອົງໄຖ່ພວກເຮົາແລະເຮັດໃຫ້ພວກເຮົາເປັນພາກສ່ວນທີ່ສຳຄັນອີກເທື່ອນຶ່ງຂອງຊັຍຊະນະ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ** VR.